Moms in Prayer
INTERNATIONAL ™
ກຸ່ມອະທິຖານສາກົນຂອງບັນດາແມ່ງ

# ເຫລັກຄວາມເຊື່ອ

1. ພວກເຮົາເຊື່ອວ່າພະຄຳພີໄດ້ຮັບການດົນໃຈຈາກພະວິນຍານບໍລິສຸດ, ບໍ່ມີຜິດພາດ, ຖ້ອຍຄຳທີ່ມີອຳນາດຂອງພະເຈົ້າເຊິ່ງເປັນປະໂຫຍດໃນທາງຄວາມເຊື່ອ ແລະປະພຶດ/ການກະທຳ.

   ພບຍສອງ 4:2; ພສສ 19:7-9; ສພສ 30:5,6; 1ກລທ 2:13, ຄລຕ1:8-9; 2ຕມທ 3:15-17; 2ປຕ 1:20-21; ພນມ 22:18-19

2. ພວກເຮົາເຊື່ອວ່າມີພະເຈົ້າອົງດຽວ, ພະອົງມີຊີວິດຢູ່ຕະຫລອດການໃນສາມ ພະພາກ ຄື ພະບິດາ, ພະບຸດ ແລະ ພະວິນຍານບໍລິສຸດ.

   ປຖມ 1:1-3; ອຊຢ 44:6-8; ມທ 28:19-20; ມລກ 12:29; ຢຮ 1:1-4; ກຈກ 5:3-4; 2ກລທ 13:14

3. ພວກເຮົາເຊື່ອພະເຈົ້າພະບິດາແມ່ນພະເຈົ້າຕະຫລອດການ, ພະວິນຍານບໍ່ສຸດທີ່ເປັນສ່ວນບຸກຄົນ ປະກອບດ້ວຍຄວາມບໍລິສຸດທີ່ບໍ່ມີຕຳນິ,ສະຕິປັນຍາ, ກຳລັງ, ແລະຄວາມຮັກ. ພວກເຮົາວ່າເຊື່ອພະອົງປະກອບດ້ວຍຄວາມເມດຕາໃນທຸກສຸກ/ບັນຫາຂອງແຕ່ລະຄົນໂດຍພະອົງຍິນແລະຕອບຄຳອະທິຖານຂອງພວກເຮົາ, ແລະພະອົງໃຫ້ຄວາມພົ້ນຈາກຄວາມບາບແລະຄວາມຕາຍສຳລັບຜູ້ທີ່ເຂົ້າມາຫາພະອົງຜ່ານທາງພະເຢຊູຄຣິດ.

   ປຖມ 21:33; ອພຍ 33:14; 2 ສມອ 24:14; ອຊຢ 40:28; ຢລມ 31:3, 32:17; ຢຮ 4:24; ໂລມ 5:8,11:33-34; ອຟຊ 1:19-20; 1 ຢຮ 5:14-15; ພນມ 4:8

4. ພວກເຮົາເຊື່ອພະເຈົ້າພະບຸດຄືພະເຢຊູຄຣິດພະບຸດຂອງພະເຈົ້າເຊິ່ງເປັນພະເຈົ້າໃນໂຕຂອງເພິ່ນເອງ, ໃນຄວາມບໍລິສຸດໃນການບັງເກີດຂອງພະອົງ,ໃນຊີວິດທີ່ປາດສະຈາກຄວາມບາບ ແລະໃນການອັດສະຈັນຕ່າງໆຂອງພະອົງ, ໃນການຮັບແທນແລະເປັນເຄື່ອງບູຊາຂອງຄວາມຕາຍຜ່ານໂລຫິດຂອງພະອົງ, ໃນຮ່າງກາຍທີ່ຟື້ນຄືນມາຂອງພະອົງ, ໃນການສະເດັດຂຶ້ນສູ່ຟ້າສະຫວັນແລະປະທັບເບື້ອງຂວາພະຫັດຂອງພະບິດາ, ໃນການສືບຕໍ່ຄຳພະວານາອະທິຖານສຳລັບຄົນຂອງພະອົງ ແລະພະອົງຈະເດັດກັບມາພ້ອມລິດອຳນາດ ແລະສະຫງ່າລາສີ.

   ມທ 24:30; ມລກ 8:38; ລກ 1:34-35, 24:27; ຢຮ 1:1-2,14,18, 3:16; ໂລມ 3:23-26,& 8:34; 1ກລທ 15:3-4; ຮຮ 4:15

5. ພວກເຮົາເຊື່ອພະເຈົ້າພະວິນຍານບໍລິສຸດຄືຜູ້ຊ່ອຍແລະຜູ້ເລົ້າໂລມ, ພະອົງນຳພາແລະເປີດເຜີຍຄວາມຈິງ, ໃຫ້ຮູ້/ເປີດເຜີຍຄວາມບາບ, ຄວາມຊອບທຳແລະການຕັດສິນ,ແລະການສະຖິດຢູ່ຂອງພະອົງກັບຜູ້ທີ່ເຊື່ອໃນນາທີທີ່ພວກເຂົາໄດ້ຮັບຄວາມລອດພົ້ນແລະພະອົງຍັງຊ່ອຍໃຫ້ພວກເຂົາດຳເນີນຊີວິດໃນທາງຊອບທຳ/ຖືກຕ້ອງ.

   ຢຮ 3:5-8,14:16-17,16:13-14; ກຈກ 1:8; 1ກລທ 12:13; ອຟຊ 4:30-32, 5:18

6. ພວກເຮົາເຊື່ອວ່າທຸກຄົນເກີດມາໂດຍມີທຳມະຊາດຂອງຄວາມບາບ ແລະຫ່າງຈາກພະລັດສະຫມີຂອງພະເຈົ້າ ແລະຕ້ອງການຄວາມລອດພົ້ນ. ຊີວິດໃຫມ່ຜ່ານທາງພະວິນຍານແມ່ນເປັນສິ່ງສຳຄັນສຳລັບຄວາມລອດພົ້ນໂດຍການສະລະພາບຄວາມບາບ ແລະການຍອມຮັບວ່າພະເຢຊູແມ່ນພະເຈົ້າແລະຜູ້ໄຖ່ໃຫ້ລອດ.

   ຢຮ 3:5-8, 5:24; ກຈກ 2:21; ອຟຊ 1:6-7, 2:8-9; ຕຕ 3:5; 1ປຕ 1:23

7. ພວກເຮົາເຊື່ອວ່າການຄືນມາຈາກຕາຍແມ່ນທັງຜູ້ໄດ້ຮັບຄວາມລອດ ແລະຜູ້ທີ່ຫລົງຫາຍ. ຜູ້ໄດ້ຮັບຄວາມລອດການຄືນມາຈາກາຕາຍແມ່ນຊີວິດອັນຕະຫລອດໄປເປັນນິດແລະສຳລັບຜູ້ຫລົງຫາຍການຄືນມາຈາກຕາຍແມ່ນການສາບແຊ່ງຫລົງໂທດຕະຫລອດໄປເປັນນິດ.

   ລກ 16:19-26; 2ກລທ 5:8; ຟລປ 1:23; 2 ຕສລກ 1:7-9; ພນມ 20:11-15

8. ພວກເຮົາເຊື່ອໃນຄວາມເປັນອັນຫນຶ່ງອັນດຽວກັນຝ່າຍວິນຍານສຳລັບຜູ້ທີ່ເຊື່ອພະເຢຊູຄຣິດເຈົ້າ.

   ກຈກ 2:42-47; ໂລມ 15:5-6; 1ກລທ 12:12-13; ອຟຊ 4:3-6